## ມິຊຊາອາທິດທີ 5 ກາງມົດບຳເພັນສິນ
## ວັນທີ 26 ມີນາ 2023



**ພຣະວໍລະສານໂດຍນັກບຸນຢວງ 11, 3-7, 17, 20-27, 34-35 (ແບບສັ້ນ)**

ໃນເວລານັ້ນ, ນາງມາກທາແລະມາຣີອາຜູ້ເປັນເອື້ອຍນ້ອງຂອງລາຊາໂຣໄດ້ສັ່ງຄົນໄປຂ່າວໃຫ້ພຣະເຢຊູເຈົ້າຊາບວ່າ: ໂອພຣະອົງເຈົ້າເອີຍ, ຜູ້ທີ່ພຣະອົງຮັກແພງນັ້ນກຳລັງເຈັບໜັກ. ເມື່ອຊາບຂ່າວນີ້ພຣະເຢຊູເຈົ້າກ່າວວ່າ: ການເຈັບໄຂນີ້ບໍ່ເຖິງຕາຍດອກ; ແຕ່ຈະເປັນໂອກາດເທີດທູນກຽດມຸງຄຸນຂອງພຣະເຈົ້າ ເພື່ອໃຫ້ພຣະບຸດຂອງພຣະເຈົ້າໄດ້ຮັບສີມຸງຄຸນເທົ່ານັ້ນແລ້ວ. ຕາມຈິງແລ້ວ ພຣະເຢຊູເຈົ້າຊົງຮັກແພງມາກທາ, ມາຣີອາ ແລະລາຊາໂຣ.

ເມື່ອພຣະອົງຊາບຂ່າວວ່າລາຊາໂຣປ່ວຍ, ພຣະອົງຍັງພັກເຊົາທີ່ນັ້ນອີກສອງວັນ. ແລ້ວນັ້ນພຣະອົງຈຶ່ງກ່າວກັບພວກສາວົກວ່າ: ພວກເຮົາຈົ່ງພາກັນໄປແຂວງຢູເດເຖີດ.

ເມື່ອພຣະເຢຊູເຈົ້າສະເດັດມາຮອດເຂົາຝັງລາຊາໂຣໄດ້ສີ່ວັນແລ້ວ. ເມື່ອນາງມາກທາຊາບຂ່າວວ່າ: ພຣະເຢຊູເຈົ້າສະເດັດມາ ,ນາງກໍແລ່ນໄປຕ້ອນຮັບ. ສ່ວນນາງມາຣີອານັ້ນຢູ່ເຮືອນ. ນາງມາກທາທູນພຣະເຢຊູເຈົ້າວ່າ: ພຣະອົງເຈົ້າເອີຍ! ຖ້າພຣະອົງຢູ່ທີ່ນີ້ເວລານັ້ນນ້ອງຊາຍຂອງຂ້ານ້ອຍຄົງຈະບໍ່ຕາຍ. ແຕ່ຂ້ານ້ອຍຮູ້ຢູ່ດຽວນີ້ວ່າ ພຣະອົງວອນຂໍສິ່ງໃດນຳພຣະເຈົ້າ, ພຣະເຈົ້າກໍຈະປະທານໃຫ້. ພຣະເຢຊູເຈົ້າກ່າວວ່າ: ນ້ອງຊາຍຂອງເຈົ້າຈະກັບເປັນຄືນມາ. ນາງມາກທາທູນຕອບວ່າ: ຂ້ານ້ອຍຮູ້ດີວ່າ ນ້ອງຂ້ານ້ອຍຈະກັບເປັນຄືນມາໃນວັນສິ້ນພິພົບ. ພຣະເຢຊູເຈົ້າກ່າວວ່າ: ເຮົາຄືການກັບເປັນຄືນມາແລະຊີວິດ, ໃຜເຊື່ອໃນເຮົາແມ່ນວ່າຕາຍໄປແລ້ວ ກໍຈະກັບມີຊີວິດອີກ. ແລະທຸກຄົນທີ່ມີຊີວິດຢູ່ ແລະເຊື່ອໃນເຮົາຈະບໍ່ຕາຍຕະຫລອດນິລັນດອນ. ເຈົ້າເຊື່ອຄວາມນີ້ບໍ? ນາງມາກທາທູນຕອບວ່າ: ໂດຍພຣະອົງເຈົ້າເອີຍ, ຂ້ານ້ອຍເຊື່ອວ່າ ພຣະອົງແມ່ນພຣະກຣິສໂຕ, ພຣະບຸດຂອງພຣະເຈົ້າຜູ້ຊົງຊີວິດແລະໄດ້ສະເດັດມາໃນໂລກນີ້.

ພຣະເຢຊູເຈົ້າເຫັນນາງມາຣີອາໄຫ້ສະອຶກສະອື້ນ, ພວກຢູເດວທີ່ມານຳກໍພາກັນໄຫ້ດ້ວຍ. ພຣະອົງຊົງຕື້ນຕັນແລະອຸກທຸກພຣະໄທ ກ່າວວ່າ: ພວກເຈົ້າຝັງໄວ້ຢູ່ໃສ? ພວກເຂົາທູນວ່າ: ເຊີນພຣະອົງສະເດັດໄປເບິ່ງ. ແລ້ວພຣະອົງກໍນ້ຳຕາຕົກ. ພວກຢູເດວຈຶ່ງເວົ້າກັນວ່າ: ເຫັນບໍ! ເກີນວ່າເພິ່ນຮັກລາວແທ້. ເຫັນດັ່ງນັ້ນ, ພວກຢູເດວລາງຄົນຈຶ່ງເວົ້າວ່າ: ເພິ່ນຜູ້ນີ້ໄດ້ທຳໃຫ້ຄົນຕາບອດເຫັນຮຸ່ງໄດ້ ເພິ່ນຈະບໍ່ສາມາດຊ່ວຍຄົນນີ້ໃຫ້ຫວິດຕາຍບໍ່ໄດ້ບໍ? ພຣະເຢຊູເຈົ້າຕື້ນຕັນພຣະໄທອີກເທື່ອໜຶ່ງ ແລ້ວກໍສະເດັດໄປຄູຫາ. ຄູຫານີ້ເປັນຖ້ຳຫີນ, ມີຫີນແຜ່ນໜຶ່ງອັດປາກຄູຫາໄວ້. ພຣະເຢຊູເຈົ້າສັ່ງບອກວ່າ: ຈົ່ງກິ້ງແຜ່ນຫີນອອກ. ນາງມາກທາເອື້ອຍຂອງຜູ້ຕາຍທູນວ່າ: ພຣະອົງເຈົ້າເອີຍ, ຝັງໄດ້ສີ່ມື້ແລ້ວ, ແລະກໍມີກິ່ນດ້ວຍ. ພຣະເຢຊູເຈົ້າກ່າວວ່າ: ເຮົາບໍ່ໄດ້ບອກເຈົ້າບໍວ່າ: ຖ້າເຈົ້າມີຄວາມເຊື່ອເຈົ້າກໍຈະເຫັນສີມຸງຄຸນຂອງພຣະເຈົ້າ. ເຂົາກໍພາກັນກິ້ງກ້ອນຫີນອອກ. ພຣະເຢຊູເຈົ້າຊົງເງີຍພຣະເນດຂຶ້ນເທິງຟ້າ ແລະພາວະນາວ່າ:

ໂອພຣະບິດາເຈົ້າ, ລູກຂໍຂອບພຣະຄຸນພຣະອົງ ທີ່ໄດ້ສະດັບຟັງຄຳວິງວອນຂອງລູກ. ລູກຊາບດີວ່າ ພຣະອົງຊົງຟັງຄຳວິງວອນຂອງລູກສະເໝີ. ແຕ່ການທີ່ລູກເວົ້າດັ່ງນີ້ ກໍເພື່ອໃຫ້ຜູ້ຄົນທີ່ຢູ່ອ້ອມໆລູກນີ້ ໄດ້ເຊື່ອວ່າພຣະອົງໄດ້ໃຊ້ລູກມາ. ກ່າວດັ່ງນີ້ແລ້ວ, ພຣະອົງກໍຮ້ອງສຽງດັງວ່າ: ລາຊາໂຣ, ຈົ່ງອອກມານອກ. ທັນທີຜູ້ຕາຍກໍອອກມາ. ມືຕີນຍັງມີຜ້າມັດຢູ່, ໜ້າຕາກໍມີແພທໍ່ດ້ວຍ. ພຣະເຢຊູເຈົ້າຊົງສັ່ງບອກວ່າ: ຈົ່ງແກ້ແພມັດອອກ ແລະປ່ອຍລາວໄປ. ພວກຢູເດວເປັນຈຳນວນມາກທີ່ຕິດຕາມນາງມາຣີອາ ແລະມາກທາມານັ້ນ ກໍໄດ້ເຫັນສິ່ງທີ່ພຣະເຢຊູເຈົ້າຊົງກະທຳ ແລະກໍພາກັນເຊື່ອໃນພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນອາທິດທີ່ຜ່ານມາ, ພຣະເຢຊູເຈົ້າໄດ້ເປີດຕາຄົນຕາບອດແຕ່ກຳເນີດໃຫ້ເຫັນແສງສະວ່າງ ແລະ ເຫັນເຖິງຄວາມຈິງໃນຕົວຂອງພຣະອົງຜູ້ເປັນ "ພຣະບຸດຂອງພຣະເຈົ້າ".

ວັນນີ້, ພວກເຮົາກ້າວເຂົ້າສູ່ອາທິດສຸດທ້າຍຂອງກຳນົດບຳເພັນສິນ. ເພາະວັນອາທິດຕໍ່ໄປຈະເປັນວັນອາທິດໃບລານຊຶ່ງເປັນວັນເລີ່ມຕົ້ນອາທິດສັກສິດ, ເປັນຊ່ວງເວລາທີ່ພຣະເຢຊູເຈົ້າພ້ອມກັບພວກລູກສິດກ້າວເຂົ້າສູ່ນະຄອນເຢລູຊາແລມເພື່ອຮັບທໍລະມານ ແລະຕາຍ. ກ່ອນເຫດການນີ້ຈະເປັນມາ, ວັນນີ້ພຣະເຢຊູເຈົ້າໄດ້ໃຫ້ພວກເຮົາເຫັນເຄື່ອງໝາຍແຫ່ງການກັບເປັນຄືນມາຂອງລາຊາໂຣ, ຜູ້ຕາຍແລະຝັງໃນຄູຫາໄດ້ສີ່ວັນແລ້ວ. ເຖິງວ່າລາຊາໂຣຈະກັບເປັນຄືນມາຈາກຄວາມຕາຍ, ແຕ່ວັນໜຶ່ງເຂົາກໍຕ້ອງໄດ້ຕາຍອີກ. ສ່ວນພຣະເຢຊູເຈົ້າຜູ້ກັບເປັນຄືນມາຈາກຄວາມຕາຍ, ພຣະອົງຈະບໍ່ຕາຍອີກເລີຍ. ແລະທຸກຄົນທີ່ເຊື່ອໃນພຣະອົງກໍຈະໄດ້ຮັບຊີວິດນິລັນດອນເໝືອນກັບພຣະອົງ. ວັນນີ້, ພຣະເຢຊູເຈົ້າກໍຈະຖາມພວກເຮົາເໝືອນກັບພຣະອົງໄດ້ຖາມນາງມາກທາວ່າ: "ເຈົ້າເຊື່ອຂໍ້ຄວາມນີ້ບໍ?". ແນ່ນອນ, ຄຳຕອບຂອງພວກເຮົາແຕ່ລະຄົນຈະແຕກຕ່າງກັນ. ແຕ່ຄຳຕອບທີ່ຖືກຕ້ອງແມ່ນຄຳຕອບຂອງນາງມາກທາວັນນີ້ວ່າ: "ໂດຍ, ພຣະອົງເຈົ້າ, ຂ້ານ້ອຍເຊື່ອວ່າພຣະອົງແມ່ນພຣະກຣິສໂຕ, ພຣະບຸດຂອງພຣະເຈົ້າຜູ້ຊົງຊີວິດ ແລະໄດ້ສະເດັດມາໃນໂລກນີ້". ເພາະມີແຕ່ຄວາມເຊື່ອເທົ່ານັ້ນທີ່ຈະທຳໃຫ້ພວກເຮົາໄດ້ກັບເປັນຄືນມາເໝືອນກັບພຣະເຢຊູເຈົ້າ. ແລະກໍມີແຕ່ຄວາມເຊື່ອເທົ່ານັ້ນທີ່ຊ່ວຍພວກເຮົາໃຫ້ມີສ່ວນຮ່ວມໃນຊີວິດຂອງພຣະເຢຊູເຈົ້າ ອັນແມ່ນຊີວິດນິລັນດອນນັ້ນເອງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ເຊື່ອໝັ້ນໃນພຣະອົງຢ່າງແທ້ຈິງວ່າ ພຣະອົງແມ່ນພຣະກຣິສໂຕ, ພຣະບຸດຂອງພຣະເຈົ້າຜູ້ສະເດັດມາໃນໂລກນີ້ເພື່ອຊ່ວຍລູກແລະທຸກຄົນໃຫ້ຫວິດພົ້ນຈາກຄວາມຕາຍແລະໃຫ້ໄດ້ຊີວິດນິລັນດອນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ